ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0563 /ຜ-ຟຟລ -

ນະຄອນຫຼວງວຽງຈັນ, ວັນທີ 11 MAR 2019

## ໜັງສືແຈ້ງເຊີນປະມູນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການຄັດເລືອກບໍລິສັດຜູ້ຮັບເໝົາ ສຳລັບໂຄງການປັບປຸງເສັ້ນທາງພາຍໃນ ເຂື່ອນໄຟຟ້ານ້ຳຄານ 2-3, ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ.

2. ຜ-ຟຟລ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການຮັບເໝົາກໍ່ສ້າງເສັ້ນທາງ ຕາມທີ່ໄດ້ລະບຸໃນຂໍ້ 1.

3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.

4. ການປະມູນນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ມີຄວາມສາມາດໃຫ້ບໍລິການວິສະວະກຳໂຍທາ (ການກໍ່ສ້າງຖະໜົນ, ຫົນທາງ).

5. ບໍລິສັດ ທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້ ໃນວັນລັດຖະການ, ນັບຈາກວັນທີ 18/03/2019 ເປັນຕົ້ນໄປ, ຕອນເຊົ້າເວລາ 08:30 - 12:00 ໂມງ ແລະ ຕອນບ່າຍ 13:00 - 17:00 ໂມງ. ສຳນັກງານຕັ້ງຢູ່ ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ ສປປ. ລາວ ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

6. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ເລີ່ມແຕ່ວັນທີ 18/03/2019 ເປັນຕົ້ນໄປ, ໃນວັນ ແລະ ເວລາທີ່ລະບຸໃນຂໍ້ 5, ໃນລາຄາ 2.500.000 (ສອງລ້ານຫ້າແສນ) ກີບ/ຊຸດ, ວິທີການຊຳລະຕ້ອງ ຊຳລະເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

7. ການລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ຖາມ-ຕອບກ່ຽວກັບໂຄງການດັ່ງກ່າວ ຈະໄດ້ຈັດຂຶ້ນທີເຂື່ອນໄຟຟ້ານ້ຳຄານ 2-3 ໃນວັນທີ: 02/04/2019, ເວລາ: 10:00 ໂມງ, ສະຖານທີດັ່ງກ່າວຕັ້ງຢູ່: ບ້ານປາກແວດ ແລະ ບ້ານແກ້ງກຸ້ງ, ເມືອງຊຽງເງິນ ແຂວງຫຼວງພະບາງ.

8. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ກ່ອນເວລາ 14:00 ໂມງ, ວັນທີ 19/04/2019. ຊອງປະມູນໃດທີ່ສົ່ງຊ້າກ່ວາເວລາທີ່ກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 19/04/2019 ໂດຍຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

**ຜູ້ອຳນວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ກະຊວງ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company
ນະຄອນຫຼວງວຽງຈັນ

**ທອງເພັດ ດວງເງິນ**

**ຮອງຜູ້ອຳນວຍການໃຫຍ່**

ໝາຍເຫດ: ຂໍ້ມູນເພີ່ມເຕີມຕິດຕໍ່: 021 316 834.